| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ການແຈ້ງພາສີຂາເຂົ້າ ແລະ ຂາອອກ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoF-CD-21 | 04.01.2018 | ກົມພາສີ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ເພື່ອເປັນຫຼັກຖານຢັ້ງຢືນວ່າ ໃນການນໍາເຂົ້າ ແລະ ສົ່ງອອກສິນຄ້າດັ່ງກ່າວເຂົ້າມາໃນ ສປປ ລາວນັ້ນ, ຜູ້ນໍາເຂົ້າໄດ້ຊໍາລະພັນທະ ພາສີ ແລະ ຄ່າທໍານຽມຕ່າງໆ ທີ່ກ່ຽວຂ້ອງ ຢ່າງຄົບຖ້ວນ ພາຍໃຕ້ກົດໝາຍຂອງ ສປປ ລາວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ທີ່ມີຈຸດປະສົງນໍາເອົາສິນຄ້າເຂົ້າມາ ແລະ ສົ່ງອອກ ໃນອານາເຂດພາສີຂອງ ສປປ ລາວ ແຕ່ບໍ່ລວມເອົາ ການແຈ້ງສິນຄ້າຍ່ອຍ, ການແຈ້ງເຄື່ອງຕິດຕົວຜູ້ໂດຍສານ, ການແຈ້ງພາຫະນະນໍາເຂົ້າ-ນໍາອອກ ເພື່ອການທ່ອງທ່ຽວຢ້ຽມຢາມ ແລະ ການແຈ້ງສິນຄ້າສົ່ງທາງໄປສະນີ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 1 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸເຖິງໄລຍະເວລາໃນການພິຈາລະນາອອກການຢັ້ງຢືນນີ້ໄວ້. ເຈົ້າໜ້າທີ່ແຈ້ງວ່າ ໃນທາງປະຕິບັດ ພາຍຫຼັງການແຈ້ງພາສີລະອຽດ, |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| | | ເຈົ້າໜ້າທີ່ທີ່ດ່ານໃຊ້ເວລາໃນການດວກເພື່ອປ່ອຍສິນຄ້າປົກຕິ 1 ວັນລັດຖະການ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | ຜູ້ຮ້ອງຂໍຕ້ອງປະຕິບັດຕາມຂັ້ນຕອນໃນການແຈ້ງພາສີຂາເຂົ້າ ຢ່າງເຂັ້ມງວດ ດັ່ງນີ້: 1. ການແຈ້ງໃບຂົນສົ່ງສິນຄ້າ ພາຍໃນ 24 ຊົ່ວໂມງພາຍຫຼັງສິນຄ້າມາຮອດດ່ານ; 2. ການປະກອບຂໍ້ມູນໃສ່ໃບແຈ້ງພາສີ ຕ້ອງດໍາເນີນຜ່ານລະບົບເອເລັກໂຕຼນິກອາຊີກູດາ ທັງນີ້ ອາດດໍາເນີນການແຈ້ງພາສີເປັນລາຍລະອຽດລ່ວງໜ້າໄດ້ ແລະ ພາຍຫຼັງສໍາເລັດການປະກອບຂໍ້ມູນ ຕ້ອງໄດ້ສະແກນເອກະສານປະກອບທັງໝົດເຂົ້າລະບົບ ແລະ ພິມໃບແຈ້ງພາສີທີ່ໄດ້ລົງທະບຽນແລ້ວ ແລະ ລົງລາຍເຊັນຈໍ້າກາ. ສຸດທ້າຍ ຕ້ອງໄດ້ລົງທະບຽນໃບແຈ້ງໃນລະບົບອາຊີກູດາ ກ່ອນນໍາເອົາໃບແຈ້ງພາສີຕົ້ນສະບັບພ້ອມເອກະສານທັງໝົດ ໄປຍື່ນຕໍ່ເຈົ້າໜ້າທີ່ຢູ່ດ່ານພາສີ ເພື່ອກວດກາ; 3. ພາຍຫຼັງເອກະສານແຈ້ງພາສີຖືກຮັບຮອງໂດຍເຈົ້າໜ້າທີ່ຢູ່ດ່ານພາສີແລ້ວ, ຜູ້ແຈ້ງພາສີຕ້ອງດໍາເນີນການຊໍາລະຄ່າພາສີ ແລະ ພັນທະອື່ນໆ ເຊັ່ນ: ຜ່ານລະບົບ Smart Tax; 4. ພາຍຫຼັງສໍາເລັດການຊໍາລະຄ່າພາສີ ແລະ ພັນທະອື່ນໆ ຕ້ອງສົ່ງເອກະສານທັງໝົດໃຫ້ ຫົວໜ້າ ຫຼື ຮອງຫົວໜ້າດ່ານ ພິຈາລະນາອະນຸມັດ ຈຶ່ງນໍາເອົາເອກະສານທັງໝົດໄປແຈ້ງຕໍ່ເຈົ້າໜ້າທີ່ພາສີຄຸ້ມຄອງສາງສິນຄ້າ ເພື່ອປ່ອຍສິນຄ້າອອກຈາກສາງ ຫຼື ດ່ານພາສີ. | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດໃນກໍລະນີທີ່ ຜູ້ແຈ້ງພາສີບໍ່ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ເຊັ່ນ: ໃບແຈ້ງພາສີເປັນລາຍລະອຽດບໍ່ຖືກຕ້ອງກັບເອກະສານ, ເອກະສານປະກອບບໍ່ຄົບຖ້ວນ ແລະ ອື່ນໆ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ບໍ່ມີ | 0 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ການແຈ້ງພາສີ ແມ່ນຕ້ອງດໍາເນີນການເປັນລາຍຄັ້ງທີ່ນໍາເຂົ້າ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທໍານຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 0.00 | 0.00 | 10000.00 | 10000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງເຈົ້າໜ້າທີ່ ທັງນີ້ ຄ່າແບບຟອມນີ້ແມ່ນແຍກຕ່າງຫາກຈາກ ຄ່າຄຸ້ມຄອງລະບົບອາຊີກູດາ ແລະ ພາສີ ຫລື ພັນທະອື່ນໆ ທີ່ຕ້ອງໄດ້ມີການຊໍາລະສອດຄ່ອງກັບ ປະເພດສິນຄ້າໃຫ້ຄົບຖ້ວນ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍ ພາສີ (ສະບັບປັບປຸງ) | 04/ສພຊ | 20.12.2011 | |
| ບົດແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ | 1559/ກງ | 24.05.2016 | |
| ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ນໍາໃຊ້ ຄ່າບໍລິການດໍາເນີນການແຈ້ງພາສີ | 2575/ກງ | 10.08.2016 | |
| ບົດແນະນໍາ ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ | 00097/ກພສ | 06.01.2017 | ຂໍ້ 10 ການແຈ້ງພາສີຂາເຂົ້າ |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຂົນສົ່ງສິນຄ້າ |
| ໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |

| ເອກະສານປະກອບ |
|---|
| ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ (ໃນກໍລະນີເປັນສິນຄ້າຄວບຄຸມ) |
| ໃບຢັ້ງຢືນສິດທິພິເສດດ້ານອັດຕາພາສີຂອງກົມພາສີ |
| ໃບລາຍການຫຸ້ມຫໍ່ສິນຄ້າ |
| ໃບສັ່ງຊື້ສິນຄ້າ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 300000 | 0 |
| 2016 | | |